ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ..73..../ນຍ

ນະຄອນຫຼວງວຽງຈັນ, ວັນທີ..28..9..2015

# ຂໍ້ຕົກລົງ

## ຂອງນາຍົກລັດຖະມົນຕີ ວ່າດ້ວຍນະໂຍບາຍສົ່ງເສີມເພີ່ມເຕີມ ຂອງການລົງທຶນ ຢູ່ ເຂດເສດຖະກິດສະເພາະ ບຶງທາດຫລວງ ແລະ ຂພສ ໃນຂອບເຂດທົ່ວປະເທດ

- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນສະບັບເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ 2009;
- ອີງຕາມດຳລັດວ່າດ້ວຍເຂດເສດຖະກິດພິເສດ ແລະເຂດເສດຖະກິດສະເພາະ (ເອີ້ນຫຍໍ້ວ່າ ຂພສ) ສະບັບເລກທີ 443/ນຍ, ລົງວັນທີ 26 ຕຸລາ 2010;
- ອີງຕາມສັນຍາວ່າດ້ວຍການພັດທະນາເຂດເສດຖະກິດສະເພາະບຶງທາດຫລວງ (ເມືອງທ່ອງທ່ຽວໜອງ ນໍ້າທຳມະຊາດ ແລະວັດທະນະທຳ) ຄັ້ງວັນທີ 28 ທັນວາ 2011;
- ອີງຕາມຂໍ້ຕົກລົງວ່າດ້ວຍການສ້າງຕັ້ງເຂດເສດຖະກິດສະເພາະບຶງທາດຫລວງ ສະບັບເລກທີ 13/ຄຂພສ, ລົງວັນທີ 28 ທັນວາ 2011;
- ອີງຕາມມະຕິຂອງກອງປະຊຸມຕີຄວາມໝາຍທາງດ້ານກົດໝາຍ ໃນການຈັດຕັ້ງປະຕິບັດ ແລະ ແກ້ໄຂຂໍ້ຄົງຄ້າງ ຂອງ ຂພສ ບຶງທາດຫລວງ ໃນຄັ້ງວັນທີ 06 ພຶດສະພາ 2014 ລະຫວ່າງ ຄຂພສ ກັບ ຄະນະປະຈຳສະພາແຫ່ງຊາດ;
- ອີງຕາມມະຕິຂອງກອງປະຊຸມ ນາຍົກ-ຮອງນາຍົກ ຄັ້ງວັນທີ 24 ກໍລະກົດ 2015.

**ນາຍົກລັດຖະມົນຕີ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດນະໂຍບາຍສົ່ງເສີມເພີ່ມເຕີມ ຕໍ່ການລົງທຶນ ເຂດເສດຖະກິດສະເພາະບຶງທາດຫລວງ (ເອີ້ນຫຍໍ້ວ່າ ຂສທ) ແລະ ຂພສ ໃນຂອບເຂດທົ່ວປະເທດ ເພື່ອສົ່ງເສີມ ແລະ ດຶງດູດການລົງທຶນ, ແນໃສ່ຊຸກຍູ້ການພັດທະນາ ໃຫ້ໄວຂຶ້ນ ແລະ ບັນລຸເປົ້າໝາຍຕາມທີ່ວາງໄວ້.

**ມາດຕາ 2. ນະໂຍບາຍສົ່ງເສີມການລົງທຶນ**

ນາຍົກລັດຖະມົນຕີ ກຳນົດນະໂຍບາຍສົ່ງເສີມເພີ່ມເຕີມ ຕໍ່ການລົງທຶນ ຂສທ, ຂພສ ໂດຍສອດຄ່ອງກັບນິຕິກຳການພັດທະນາ ແລະ ຄຸ້ມຄອງ ຂພສ, ເປົ້າໝາຍການພັດທະນາ ທີ່ໄດ້ກຳນົດໄວ້ໃນສັນຍາວ່າດ້ວຍການພັດທະນາ ແລະມະຕິຕົກລົງຂອງກອງປະຊຸມລະຫວ່າງ ຄະນະປະຈຳສະພາແຫ່ງຊາດ ແລະ ຄຂພສ ທີ່ມີລັກສະນະພິເສດ ແລະສະເພາະ ເປັນຕົ້ນ: ແມ່ນການບໍລິການປະຕູດຽວຢູ່ກັບທີ່ ກ່ຽວກັບການເກັບຄ່າທຳນຽມ, ການເກັບອາກອນ, ການນຳໃຊ້ທີ່ດິນ, ການຄຸ້ມຄອງພົນລະເມືອງ (ການອອກສຳມະໂນຄົວ, ບັດປະຈຳຕົວ, ບັດແຮງງານ), ການບໍລິການວິຊາເຂົ້າ-ອອກ ຫຼາຍເທື່ອ, ທັງໝົດດັ່ງທີ່ກ່າວມາຂ້າງເທິງນັ້ນ ຈະໄດ້ຮັບສ່ວນຫຼຸດຂອງການເກັບລາຍຮັບຕາມຂໍ້ຕົກລົງ ຂອງກະຊວງການເງິນ ສະບັບເລກທີ 521/ກງ.ຫກ, ລົງວັນທີ 26 ມີນາ 2015.

**ມາດຕາ 3. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບພົນລະເມືອງ ທີ່ດຳລົງຊີວິດ ແລະ ປະກອບການ ຢູ່ ຂສທ ແລະ ຂພສ ອື່ນໃນຂອບເຂດທົ່ວປະເທດ ຕາມຈຸດພິເສດ ແລະ ສັນຍາຂອງເຂດນັ້ນ.

## ໝວດທີ 2
## ນະໂຍບາຍດ້ານອາກອນ

**ມາດຕາ 4. ອາກອນກຳໄລ**

ຜູ້ລົງທຶນ ທີ່ຈົດທະບຽນນຳສະພາບໍລິຫານ ຂສທ, ຂພສ ຈະໄດ້ຮັບນະໂຍບາຍທາງດ້ານອາກອນກຳໄລ ດັ່ງນີ້:

- ກິດຈະການບໍລິການສາທາລະນຸປະໂພກ ຍົກເວັ້ນອາກອນກຳໄລ 5 ປີ;
- ກິດຈະການລົງທຶນ ຂະໜາດນ້ອຍ ແລະຂະໜາດກາງ ຍົກເວັ້ນອາກອນກຳໄລ 4 ປີ;
- ກິດຈະການທີ່ມີກຳໄລໄວ ເປັນຕົ້ນ ກິດຈະການບໍລິການ, ການຄ້າ ຍົກເວັ້ນອາກອນກຳໄລ 2 ປີ;

ພາຍຫຼັງສິ້ນສຸດໄລຍະຍົກເວັ້ນແລ້ວ ແຕ່ຜູ້ລົງທຶນຍັງບໍ່ມີກຳໄລ ອາດຈະສະເໜີຕໍ່ໄລຍະເວລາການຍົກເວັ້ນອາກອນກຳໄລຕື່ມອີກ ຊຶ່ງຜູ້ລົງທຶນຕ້ອງຖືບັນຊີ ໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍການບັນຊີ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງຂອງ ສປປ ລາວ. ພາຍຫຼັງສິ້ນສຸດໄລຍະເວລາການຍົກເວັ້ນອາກອນກຳໄລແລ້ວ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍສວ່ຍສາອາກອນ.

**ມາດຕາ 5. ອັດຕາອາກອນມູນຄ່າເພີ່ມ**

ອັດຕາອາກອນມູນຄ່າເພີ່ມ ທີ່ຕ້ອງເສຍໃຫ້ລັດ ມີດັ່ງນີ້:

- ອັດຕາຫ້າສ່ວນຮ້ອຍ (5%) ສຳລັບສິນຄ້າ, ເຄື່ອງຂອງ ແລະການບໍລິການທີ່ນຳເຂົ້າ, ຜະລິດ ແລະຊົມໃຊ້ ຢູ່ພາຍໃນ ຂພສ;
- ອັດຕາສູນສ່ວນຮ້ອຍ (0%) ສຳລັບ ສິນຄ້າ, ເຄື່ອງຂອງທີ່ຜະລິດຢູ່ໃນ ຂພສ ເພື່ອສົ່ງອອກຕ່າງປະເທດ;
- ສຳລັບສິນຄ້າ, ການບໍລິການ ທີ່ນຳອອກຈາກເຂດ ມາຈຳໜ່າຍ, ຊົມໃຊ້ ແລະ ບໍລິການຢູ່ນອກເຂດ ໃຫ້ປະຕິບັດຕາມລະບຽບ, ກົດໝາຍ ຂອງ ສປປ ລາວ.

**ມາດຕາ 6. ອັດຕາອາກອນ ຢູ່ ຂພສ**

ອັດຕາອາກອນ ກຳນົດດັ່ງນີ້:

1. ອາກອນລາຍໄດ້ຈາກເງິນເດືອນ, ຄ່າແຮງງານ, ເງິນເພີ່ມໂມງ, ເງິນລ່ວງເວລາ, ເງິນຕຳແໜ່ງ, ເງິນໜ້າທີ່, ເງິນບຳເນັດປະຈຳປີ ແລະຜົນປະໂຫຍດອື່ນເປັນເງິນ ຫຼືວັດຖຸຖືກເສຍອາກອນລາຍໄດ້ສຳລັບຄົນລາວ ໃນອັດຕາທະວີຄູນ ຫ້າສ່ວນຮ້ອຍ (5%) ຂອງລາຍໄດ້ທັງໝົດທີ່ໄດ້ຮັບ;
2. ອັດຕາອາກອນປະເພດອື່ນ ແລະ ຄ່າທຳນຽມຕ່າງໆເກັບ ຫ້າສິບສ່ວນຮ້ອຍ (50%) ຂອງອັດ ຕາທີ່ກຳນົດຢູ່ໃນລະບຽບກົດໝາຍ ຂອງ ສປປ ລາວ ທີ່ປະກາດໃຊ້.

**ມາດຕາ 7. ການຄິດໄລ່ອາກອນລາຍໄດ້**

ລາຍໄດ້ຈາກເງິນເດືອນ, ຄ່າແຮງງານ, ເງິນເພີ່ມໂມງ, ເງິນລ່ວງເວລາ, ເງິນຕຳແໜ່ງ, ເງິນໜ້າທີ່, ເງິນບຳເນັດປະຈຳປີ ແລະ ຜົນປະໂຫຍດອື່ນໆ ທີ່ເປັນເງິນ ຫຼື ວັດຖຸ ຂອງພະນັກງານທີ່ເຮັດວຽກຢູ່ ຂພສ ແລະ ເຂດເສດຖະກິດສະເພາະບຶງທາດຫຼວງ ຈະໄດ້ເກັບຕາມອັດຕາທະວີຄູນ ຕາມກົດໝາຍວ່າດ້ວຍສວ່ຍສາອາກອນ. ສ່ວນແຮງງານຕ່າງປະເທດ ແມ່ນຈະໄດ້ເກັບຕາມກົດໝາຍສວ່ຍສາອາກອນ ຂອງ ສປປ ລາວ ຫຼື ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ເພື່ອຫຼີກເວັ້ນການເກັບອາກອນຊ້ຳຊ້ອນ.

ລາຍໄດ້ຈາກການໃຫ້ເຊົ່າ, ຊື້ຂາຍ-ທີ່ດິນ ແລະ ອະສັງຫາລິມະຊັບ ໃຫ້ຄິດໄລ່ບົນພື້ນຖານລາຄາຂາຍຂອງແຕ່ລະຄັ້ງ ໂດຍແມ່ນສະພາບໍລິຫານ ຂສທ, ຂພສ ສົມທົບກັບ ກຄຂພສ ພິຈາລະນາກຳນົດຕາມຄວາມເປັນຈິງ.

**ມາດຕາ 8. ພາສີນຳເຂົ້າ**

ຜູ້ພັດທະນາໄດ້ຮັບນະໂຍບາຍຍົກເວັ້ນພາສີນຳເຂົ້າກົນຈັກ, ວັດຖູປະກອນກໍ່ສ້າງ, ວັດຖຸດິບ, ຍານພາຫະນະ ທີ່ນຳໃຊ້ເຂົ້າໃນການກໍ່ສ້າງໂດຍກົງຢູ່ໃນ ຂສທ, ຂພສ. ສຳລັບຜູ້ລົງທຶນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

## ໝວດທີ 3
## ນະໂຍບາຍໃນການນຳໃຊ້ທີ່ດິນ ໃນ ຂພສ

**ມາດຕາ 9. ການຈັດສັນ ແລະການອອກໃບຢັ້ງຢືນທີ່ດິນ**

ສະພາບໍລິຫານ ຂສທ ເປັນຜູ້ຈັດສັນທີ່ດິນ, ອອກໃບຢັ້ງຢືນສິດນຳໃຊ້ທີ່ດິນ ແລະອອກໃບກຳມະສິດອະສັງຫາລິມະຊັບຊົ່ວຄາວ ແລະ ຖາວອນ ຕາມລະບຽບການ ທີ່ສະພາບໍລິຫານ ຂສທ ໄດ້ວາງອອກ.

**ມາດຕາ 10. ນະໂຍບາຍກ່ຽວກັບການນຳໃຊ້ທີ່ດິນ**

ຜູ້ລົງທຶນໃນ ຂສທ, ຂພສ ຕ້ອງໄດ້ເສຍພາສີນຳໃຊ້ທີ່ດິນໃນອັດຕາແປດສິບສ່ວນຮ້ອຍ (80%) ຂອງອັດຕາທົ່ວໄປ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ.

**ມາດຕາ 11. ການມອບ-ໂອນ ຫຼືຂາຍຕໍ່ ອະສັງຫາລິມະຊັບ ແລະທີ່ດິນ**

ຜູ້ລົງທຶນ ທີ່ໄດ້ຮັບສິດນຳໃຊ້ທີ່ດິນໃນ ຂສທ, ຂພສ ສາມາດນຳເອົາສິດດັ່ງກ່າວ ມອບໂອນ ຫຼືຂາຍຕໍ່ໃຫ້ຜູ້ລົງທຶນອື່ນ ຕາມໄລຍະເວລາທີ່ຍັງເຫຼືອ ຂອງສິດດັ່ງກ່າວ. ສ່ວນກຳມະສິດ ໃນອະສັງຫາລິມະຊັບ ແມ່ນບໍ່ມີກຳນົດອາຍຸ.

**ມາດຕາ 12. ສິດໃນການໂອນອະສັງຫາລິມະຊັບ**

ຜູ້ພັດທະນາ, ຜູ້ລົງທຶນ ດ້ານອະສັງຫາລິມະຊັບ ໃນ ຂສທ, ຂພສ ມີສິດໃນການໂອນກຳມະສິດ ຂອງອະສັງຫາລິມະຊັບດັ່ງກ່າວ ຕາມລະບຽບ, ກົດໝາຍຂອງ ສປປ ລາວ.

## ໝວດທີ 4
## ນະໂຍບາຍຕໍ່ພົນລະເມືອງ ໃນ ຂສທ, ຂພສ ແລະການໂອນທຶນ, ລາຍຮັບ ໄປຕ່າງປະເທດ

**ມາດຕາ 13. ນະໂຍບາຍຕໍ່ພົນລະເມືອງ**

ພົນລະເມືອງ (ພາຍໃນ ແລະ ຕ່າງປະເທດ) ທີ່ໄດ້ກຳມະສິດໃນອະສັງຫາລິມະຊັບ ແລະດຳເນີນທຸລະກິດ, ການຜະລິດ, ການຄ້າ ແລະການບໍລິການ ເປັນມູນຄ່າ 200,000 USD (ສອງແສນໂດລາສະຫະລັດ) ຂຶ້ນໄປ ພ້ອມດ້ວຍສະມາຊິກຄອບຄົວ ຈະໄດ້ຮັບປື້ມສຳມະໂນຄົວຕ່າງດ້າວ ເພື່ອພັກພາອາໄສ ໃນ ຂພສ ໄລຍະຍາວ.

**ມາດຕາ 14. ການສົ່ງທຶນ, ຊັບສິນ ແລະລາຍຮັບ ໄປຕ່າງປະເທດ**

ຜູ້ພັດທະນາ, ຜູ້ລົງທຶນຕ່າງປະເທດ ມີສິດສົ່ງທຶນ, ຊັບສິນ ແລະລາຍຮັບຂອງຕົນ ເປັນຕົ້ນ ກຳໄລຈາກການລົງທຶນ, ເງິນ ແລະຊັບສິນຕ່າງໆ ທີ່ເປັນກຳມະສິດສ່ວນຕົວ ຫຼືຂອງວິສາຫະກິດ ໄປຕ່າງປະເທດ ໂດຍຜ່ານທະນາຄານທີ່ຕັ້ງຢູ່ໃນ ຫຼື ນອກ ຂພສ ພາຍຫຼັງ ທີ່ໄດ້ປະຕິບັດພັນທະດ້ານພາສີ-ອາກອນ ແລະຄ່າທຳນຽມໃຫ້ລັດຢ່າງຄົບຖ້ວນແລ້ວ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ, ກົດໝາຍ ຂອງ ສປປ ລາວ.

## ໝວດທີ 5
## ການຈັດຕັ້ງປະຕິບັດ

**ມາດຕາ 15. ອົງການຈັດຕັ້ງປະຕິບັດ**

ສະພາບໍລິຫານ ຂສທ ແລະ ຂພສ ໃນຂອບເຂດທົ່ວປະເທດ ເປັນຜູ້ຈັດຕັ້ງປະຕິບັດການໃຫ້ການບໍລິການຕາມນະໂຍບາຍຕ່າງໆ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 16. ການເກັບ ພາສີ-ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ**

ພາສີ-ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການໃນ ຂສທ, ຂພສ ແມ່ນຫ້ອງການບໍລິການປະຕູດຽວເປັນຜູ້ຈັດເກັບ ຕາມຂໍ້ຕົກລົງສະບັບນີ້, ກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ, ສັນຍາພັດທະນາ ຂພສ ແລ້ວມອບເຂົ້າງົບປະມານແຫ່ງລັດ (ສູນກາງ 50%, ແຂວງ 20%, ເມືອງ 15%, ສະພາບໍລິຫານ ຂພສ 10% ແລະ ກອງທຶນພັດທະນາຊັບພະຍາກອນມະນຸດ ແລະ ສິ່ງແວດລ້ອມ 5%) ຕາມສັດສ່ວນທີ່ກຳນົດໄວ້ໃນນິຕິກຳວ່າດ້ວຍການພັດທະນາ ແລະ ຄຸ້ມຄອງ ຂພສ. ໃນເວລາຈັດຕັ້ງປະຕິບັດ ຄວນມີເຈົ້າໜ້າທີ່ ພາສີ-ອາກອນ ເຂົ້າຮ່ວມນຳ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 17. ການຈັດຕັ້ງປະຕິບັດ**

ສະພາບໍລິຫານ ຂພສ, ຜູ້ພັດທະນາ, ຜູ້ລົງທຶນໃນ ຂພສ ເປັນຜູ້ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 18. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ນິຕິກຳໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ ແມ່ນຖືກຍົກເລີກ ນອກຈາກທີ່ໄດ້ກຳນົດໄວ້ໃນສັນຍາ ຂອງຜູ້ພັດທະນາ ແລະລັດຖະບານເປັນອັນສະເພາະຕ່າງຫາກ.

**ນາຍົກລັດຖະມົນຕີ**

ທອງສິງ ທຳມະວົງ